ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ກະຊວງຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ

ກົມພັດທະນາການທ່ອງທ່ຽວ

ໃບປະເມີນຕົນເອງ

ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ

<u>ຂໍ້ມູນຜູ້ຂໍສະໝັກ ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ</u>

ຊື່:

……..

……..

……..

ທີ່ຢູ່/ທີ່ຕັ້ງ:

……..

……..

……..

……

<u>ຂໍ້ມູນຜູ້ຕິດຕໍ່ປະສານງານ</u>

ຊື່ ແລະ ຕຳແໜ່ງ

……

……..

ເບີໂທລະສັບ/ WhatApp/ Email

……

……..

ຂ້າພະເຈົ້າຂໍຢັ້ງຢືນວ່າທຸກໆຂໍ້ມູນໃນເອກະສານສະບັບນີ້ເປັນຄວາມຈິງ ແລະ ເປັນຂໍ້ມູນປັດຈຸບັນ. ຂ້າພະເຈົ້າຈະປະຕິບັດການປະເມີນຕົນເອງ ແລະ ຈັດຕັ້ງປະຕິບັດຕາມຂັ້ນຕອນການປະເມີນ, ການອອກໃບຢັ້ງຢືນ ແລະ ການມອບຮັບລາງວັນທີ່ກຳນົດຢູ່ໃນ ມາດຕະຖານການທ່ອງທ່ຽ%ແບບປະຊາຊົນມີສ່ວນຮ່ວມອາຊຽນ.

ວັນທີ/ເດືອນ/ປີ……..

ຊື່ ແລະ ລາຍເຊັນຜູ້ຍື່ນສະໝັກ

ມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ ໃບປະເມີນຕົນເອງ			
ມາດຕະຖານທີ່ຈຳເປັນເບື້ອງຕົ້ນ		**ແມ່ນ**	**ບໍ່ແມ່ນ**
a	ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຕ້ອງຖືກຄັດເລືອກໃຫ້ມາເປັນຕົວແທນໃຫ້ແກ່ຊຸມຊົນ ແລະ ປະສານງານການຈັດຕັ້ງປະຕິບັດກິດຈະກຳຕ່າງໆຢູ່ພາຍໃນຊຸມຊົນນັ້ນ;	○	○
b	ສະມາຊິກຄະນະຮັບຜິດຊອບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງເປັນບຸກຄົນທີ່ບໍ່ເຄີຍຖືກຕ້ອງຄະດີໃດໆມາກ່ອນ;	○	○
c	ວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມລວມມີ: ສະມາຊິກ ແລະ ອະນຸກຳມະການທີ່ຮັບຜິດຊອບ ການບໍລິການ ແລະ ຜະລິດຕະພັນການທ່ອງທ່ຽວ ທີ່ໄດ້ລະບຸໄວ້ນັ້ນ.	○	○
d	ຄະນະກຳມະການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ສຳເລັດການປະເມີນຕົນເອງ	○	○
e	ວຽກງານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໄດ້ລົງທະບຽນກັບກະຊວງ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ຫຼື ພະແນກ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ;	○	○
f	ພາຍຫຼັງທີ່ໄດ້ມີການລົງທະບຽນ ຫລື ໄດ້ຈັດຕັ້ງປະຕິບັດວຽກງານຢ່າງໜ້ອຍ 1 ປີ;	○	○
g	ເພື່ອໄດ້ຮັບການຮັບຮອງມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຈະຕ້ອງໄດ້ຜ່ານການປະເມີນ ແລະ ຢັ້ງຢືນ ໂດຍກະຊວງ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ ຫຼື ພະແນກ ຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວ.	○	○
ມາດຕະຖານການປະເມີນ			
1	**ການເປັນເຈົ້າຂອງ ແລະ ການຄຸ້ມຄອງຂອງຊຸມຊົນ.**		
	1.1 ການຄຸ້ມຄອງທີ່ມີປະສິດທິພາບ ແລະ ມີຄວາມໂປ່ງໃສ.	**ແມ່ນ**	**ບໍ່ແມ່ນ**
1	ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ບໍລິຫານຄຸ້ມຄອງໂດຍຄະນະຮັບຜິດຊອບເຊິ່ງແມ່ນສະມາຊິກໃນຊຸມຊົນທີ່ໄດ້ຮັບການຄັດເລືອກ ເຊິ່ງມີມີໄລຍະໃນການດຳເນີນງານເປັນເວລາ 5 ປີ	○	○
2	ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນມີໂຄງຮ່າງການຈັດຕັ້ງຈະແຈ້ງ ແລະ ຊັດເຈນ ມີການແບ່ງໜ້າທີ່ ແລະ ຄວາມຮັບຜິດຊອບຢ່າງລະອຽດ	○	○
3	ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຖືກຕ້ອງຕາມລະບຽບກົດໝາຍ ແລະ ບໍ່ຜິດຕໍ່ຮີດຄອງປະເພນີຂອງຊຸມຊົນ	○	○
4	ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຖືກຕ້ອງຕາມລະບຽບກົດໝາຍ ແລະ ບໍ່ຜິດຕໍ່ຮີດຄອງປະເພນີຂອງຊຸມຊົນ	○	○
5	ການຮັບສະໝັກສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມເພື່ອໃຫ້ບໍລິການໃນພາກສ່ວນຕ່າງໆ ເຊັ່ນ: ການໃຫ້ບໍລິການນຳທ່ຽວ, ການໃຫ້ບໍລິການທີ່ພັກ, ການໃຫ້ບໍລິການອາຫານ ແລະ ເຄື່ອງດື່ມແມ່ນອີງໃສ່ສິດສະເໝີພາບບົດບາດຍິງ–ຊາຍທີ່ທາງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໄດ້ປະຕິບັດ	○	○

6	ການຮັບສະໝັກພະນັກງານທີ່ໃຫ້ບໍລິການໃນພາກສ່ວນຕ່າງໆ ແມ່ນອີງໃສ່ຄວາມເໝາະສົມ ແລະ ຄວາມຮູ້ຄວາມສາມາດຕົວຈິງຂອງຜູ້ກ່ຽວ	○	○
7	ການຮັບເອົາສະມາຊິກໃໝ່ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມແມ່ນຕ້ອງໄດ້ຮັບການຕົກລົງເຫັນດີເປັນເອກະພາບຈາກຄະນະຮັບຜິດຊອບ	○	○
	1.2 ການສ້າງຕັ້ງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມແມ່ນຖືກຕ້ອງຕາມລະບຽບກົດໝາຍ.	**ແມ່ນ**	**ບໍ່ແມ່ນ**
1	ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນໄດ້ຮັບການຕົກລົງເຫັນດີຈາກຄະນະຮັບຜິດຊອບຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ	○	○
2	ການດຳເນີນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນໄດ້ຮັບການສະໜັບສະໜູນຈາກພາກສ່ວນຕ່າງໆ ເຊັ່ນ: ອຳນາດການປົກຄອງຂັ້ນບ້ານ ແລະ ຊຸມຊົນ.	○	○
	1.3 ການຄຸ້ມຄອງທີ່ມີປະສິດທິພາບ ແລະ ມີຄວາມໂປ່ງໃສ.	**ແມ່ນ**	**ບໍ່ແມ່ນ**
1	ຂະບວນການຄຸ້ມຄອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນສອດຄ່ອງກັບບັນດາມາດຕະຖານ ແລະ ຂໍ້ກຳນົດຕ່າງໆ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
2	ຜູ້ທີ່ເຂົ້າເປັນສະມາຊິກການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແມ່ນຍິນດີປະຕິບັດຕາມລະບຽບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນຢ່າງຕໍ່ເນື່ອງ	○	○
3	ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ໄດ້ຊ່ວຍສ້າງຄວາມອາດສາມາດໃຫ້ກັບຊຸມຊົນໃນການສົ່ງເສີມການສ້າງຜະລິດຕະພັນ ແລະ ການບໍລິການໃຫ້ແກ່ນັກທ່ອງທ່ຽວ.	○	○
4	ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຊ່ວຍສົ່ງເສີມການຊົມໃຊ້ສິນຄ້າ ແລະ ການບໍລິການຂອງຊຸມຊົນເອງ.	○	○
5	ລະບົບການບໍລິຫານການເງິນທີ່ໂປ່ງໃສ ແລະ ສະມາຊິກພາຍໃນຊຸມຊົນສາມາດເຂົ້າເຖິງເພື່ອກວດສອບໄດ້.	○	○
6	ໄດ້ສ້າງແຜນວຽກປະຈຳປີ ເຊິ່ງເປັນເອກະສານທີ່ສະມາຊິກໃນຊຸມຊົນສາມາດຮັບຮູ້ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ.	○	○
7	ໄດ້ມີການວາງເປົ້າໝາຍ ແລະ ຈຸດປະສົງໄລຍະຍາວຂອງການກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ເຊິ່ງເປັນເອກະສານທີ່ສະມາຊິກທຸກຄົນໃນຊຸມຊົນສາມາດເຂົ້າເຖິງໄດ້.	○	○
8	ມີການຕິດຕາມ ແລະ ປະເມີນຜົນ ເພື່ອປະເມີນການຈັດຕັ້ງປະຕິບັດກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
	1.4 ການຮ່ວມມືທີ່ມີປະສິດທິພາບ.	**ແມ່ນ**	**ບໍ່ແມ່ນ**
1	ມີຄູ່ມືແນະນຳໃນການຄຸ້ມຄອງການປະສານງານຂອງຊຸມຊົນ ແລະ ສຳລັບບໍລິສັດທ່ອງທ່ຽວພາຍໃນ.	○	○
2	ໃນການດຳເນີນກິດຈະກຳຕ່າງໆໃຫ້ຫຼີກລ້ຽງຜົນກະທົບທາງລົບທີ່ອາດເກີດຂຶ້ນຕໍ່ກັບຊຸມຊົນໃກ້ຄຽງ.	○	○
3	ໄດ້ຂຽນເປັນເອກະສານກຳນົດພາລະບົດບາດຂອງພາກສ່ວນກ່ຽວຂ້ອງ ເພື່ອສົ່ງເສີມການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
4	ມີຂັ້ນຕອນການປຶກສາຫາລືກັບຜູ້ທີ່ກ່ຽວຂ້ອງ ຫຼື ຜູ້ມີສ່ວນຮ່ວມຢ່າງເປັນປະຈຳ.	○	○
5	ມີການຮ່ວມມືກັບຊຸມຊົນອ້ອມຂ້າງ.	○	○

2	**ການປະກອບສ່ວນໃຫ້ສັງຄົມ.**		
	2.1 ການຮັກສາວິຖີຊີວິດຂອງຊຸມຊົນ.	**ແມ່ນ**	**ບໍ່ແມ່ນ**
1	ບໍ່ໃຫ້ມີປາກົດການຄ້າປະເວນີ, ການຄ້າສິ່ງເສບຕິດ, ການຄ້າມະນຸດ ແລະ ການຫາຜົນປະໂຫຍດຈາກການໃຊ້ແຮງງານເດັກ.	○	○
2	ບັນດາກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈະຊ່ວຍຍົກສູງບົດບາດຍິງ-ຊາຍໃນສັງຄົມ.	○	○
3	ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈະສ້າງຄວາມອາດສາມາດໃຫ້ແກ່ສະມາຊິກຜູ້ດ້ອຍໂອກາດທີ່ຢູ່ໃນຊຸມຊົນໃຫ້ໄດ້ຮັບປະໂຫຍດຢ່າງເໝາະສົມຈາກການທ່ອງທ່ຽວ (ຜູ້ດ້ອຍໂອກາດແມ່ນລວມເຖິງເດັກນ້ອຍ ແລະ ຜູ້ເຖົ້າ).	○	○
4	ກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈະຊ່ວຍປັບປຸງການບໍລິການຂັ້ນພື້ນຖານ (ສຸຂະພິບານ, ໄຟຟ້າ, ການສຶກສາ ແລະ ສາທາລະນະສຸກ).	○	○
	2.2 ຜົນປະໂຫຍດທີ່ໄດ້ຮັບ ແລະ ຕົ້ນທຶນ/ຄ່າໃຊ້ຈ່າຍ ແມ່ນມີການແບ່ງປັນ ແລະ ຮັບຜິດຊອບຮ່ວມກັນ.	**ແມ່ນ**	**ບໍ່ແມ່ນ**
1	ມີການກະກຽມໃນດ້ານການແບ່ງປັນຜົນປະໂຫຍດທີ່ເປັນເອກະພາບ ແລະ ມີຄວາມຊັດເຈນ.	○	○
2	ກອງທຶນພັດທະນາຊຸມຊົນ ແມ່ນຈະນຳໃຊ້ສຳລັບການເຄື່ອນໄຫວວຽກງານທີ່ສ້າງຜົນປະໂຫຍດໃຫ້ແກ່ຊຸມຊົນ.	○	○
3	ມີຂັ້ນຕອນທີ່ດີໃນການສ້າງໂອກາດເພື່ອສ້າງລາຍຮັບໃຫ້ຄົນໃນຊຸມຊົນຢ່າງເທົ່າທຽມກັນ.	○	○
	2.3 ມີການເຊື່ອມໂຍງກັບເສດຖະກິດພາກພື້ນ.	**ແມ່ນ**	**ບໍ່ແມ່ນ**
1	ການຈ້າງງານໃນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຕ້ອງຈ້າງສະມາຊິກຂອງຊຸມຊົນໃນທ້ອງຖິ່ນນັ້ນໆ.	○	○
2	ນຳໃຊ້ຜະລິດຕະພັນໃນຊຸມຊົນທ້ອງຖິ່ນ ເຂົ້າໃນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
3	ນຳໃຊ້ຜະລິດຕະພັນຂອງຊຸມຊົນທ້ອງຖິ່ນແທນການນຳເຂົ້າຜະລິດຕະພັນຈາກພາຍນອກ	○	○
4	ເພີ່ມທະວີການຮ່ວມມືກັບບັນດາການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມປະເພດອື່ນໆ ແລະ ບັນດາອົງການຈັດຕັ້ງທັງພາກລັດ ແລະ ເອກະຊົນ ເພື່ອເພີ່ມທະວີການທ່ອງທ່ຽວໃນພາກພື້ນໃຫ້ຈະເລີນຂຶ້ນເລື້ອຍໆ.	○	○
	2.4 ມີການປົກປັກຮັກສາ, ສືບທອດວັດທະນະທຳ ແລະ ຮີດຄອງປະເພນີ	**ແມ່ນ**	**ບໍ່ແມ່ນ**
1	ຄຸນຄ່າທາງດ້ານວັດທະນະທຳທີ່ມີຄວາມໝາຍສຳຄັນຕໍ່ຮີດຄອງປະເພນີ ແລະ ຊຸມຊົນທ້ອງຖິ່ນແມ່ນຈະໄດ້ຮັບການອະນຸລັກຮັກສາ, ບັນທຶກໄວ້ເປັນເອກະສານ ແລະ ໄດ້ຮັບການຍອມຮັບຈາກຊຸມຊົນອ້ອມຂ້າງ.	○	○
2	ມີແຜນງານເພື່ອເພີ່ມທະວີ ແລະ ເອົາໃຈໃສ່ປົກປັກຮັກສາວັດທະນະທຳທ້ອງຖິ່ນທີ່ເປັນເອກະລັກ ແລະ ຄຸນຄ່າທາງດ້ານວັດທະນະທຳໃຫ້ດຳລົງຄົງຢູ່.	○	○
3	ຕ້ອງມີການປະຕິບັດຕາມກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງກັບການປົກປັກຮັກສາວັດທະນະທຳ ແລະ ມໍລະດົກ.	○	○
4	ການຄຸ້ມຄອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຈະຊ່ວຍຮັກສາຮີດຄອງປະເພນີ ແລະ ປັບປຸງຊີວິດການເປັນຢູ່ຂອງຊຸມຊົນໃຫ້ດີຂຶ້ນ.	○	○
5	ໄດ້ມີການສ້າງຂໍ້ແນະນຳ ແລະ ໃຫ້ຄຳແນະນຳນັ້ນກັບຜູ້ທີ່ມາທ່ອງທ່ຽວກ່ຽວກັບສິ່ງທີ່ຄວນເຮັດ ແລະ ບໍ່ຄວນເຮັດ.	○	○

6	ໄດ້ຜ່ານຂັ້ນຕອນການປຶກສາຫາລືກັບຊຸມຊົນແລ້ວ ກ່ຽວກັບການອະນຸຍາດໃຫ້ນັກທ່ອງທ່ຽວເຂົ້າມາທ່ຽວຊົມ ວັດທະນະທຳ ແລະ ປະເພນີທີ່ເປັນເອກະລັກຂອງທ້ອງຖິ່ນ.	○	○
3	**ການມີສ່ວນຮ່ວມໃນການອະນຸລັກຮັກສາສະພາບແວດລ້ອມ.**		
	3.1 ການອະນຸລັກຊັບພະຍາກອນທຳມະຊາດ.	**ແມ່ນ**	**ບໍ່ແມ່ນ**
1	ແຫຼ່ງຊັບພະຍາກອນທຳມະຊາດ ແລະ ແຫຼ່ງທ່ອງທ່ຽວທີ່ມີຄວາມສຳຄັນທາງດ້ານສິ່ງແວດລ້ອມຂອງຊຸມຊົນ ໄດ້ຮັບການລະບຸ, ບັນທຶກເປັນເອກະສານ, ມີການວາງແຜນ ແລະ ຍອມຮັບຈາກຊຸມຊົນອ້ອມຂ້າງ.	○	○
2	ມີກອງທຶນເພື່ອສົ່ງເສີມບັນດາໂຄງການ ແລະ ການຈັດຕັ້ງປະຕິບັດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
3	ມີແຜນງານ ແລະ ໂຄງການ ເພື່ອປູກຈິດສຳນຶກ ແລະ ສະໜັບສະໜູນການພັດທະນາຄຸນຄ່າຂອງ ຊັບພະຍາກອນທຳມະຊາດ ແລະ ວັດທະນະທຳທ້ອງຖິ່ນໃຫ້ຍັງຄົງຄວາມອຸດົມສົມບູນ.	○	○
4	ມີກົດລະບຽບ ແລະ ຂໍ້ບັງຄັບຂອງຊຸມຊົນ ໃນການອະນຸລັກຊັບພະຍາກອນທຳມະຊາດ.	○	○
	3.2 ວຽກງານການອະນຸລັກ ເພື່ອປົກປັກຮັກສາສິ່ງແວດລ້ອມ.	**ແມ່ນ**	**ບໍ່ແມ່ນ**
1	ມີກອງທຶນສົ່ງເສີມການຈັດຕັ້ງປະຕິບັດວຽກງານການປົກປັກຮັກສາສິ່ງແວດລ້ອມຂອງຊຸມຊົນ.	○	○
2	ມີລະບົບການກຳຈັດຂີ້ເຫຍື້ອທີ່ເໝາະສົມໃນຊຸມຊົນເພື່ອຫຼີກລ້ຽງການສະສົມຂີ້ເຫຍື້ອ ໂດຍນຳໃຊ້ຫຼັກການ 3 Rs: Reduce (ໃຊ້ໃຫ້ໜ້ອຍລົງ), Reused (ນຳໃຊ້ຄືນ), Recycle (ນຳມາຜະລິດຄືນໃໝ່) ແລະ ການ ກຳຈັດຂີ້ເຫຍື້ອທີ່ຍ່ອຍສະຫຼາຍ ໄດ້ດ້ວຍການນຳໄປເຮັດເປັນປຸ໋ຍຊີວະພາບ.	○	○
3	ມີການບຳບັດນ້ຳເປື້ອນທີ່ເໝາະສົມ ເພື່ອຫຼຸດຜ່ອນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບຂອງຊຸມຊົນ.	○	○
4	ຕ້ອງປະຕິບັດຕາມກົດລະບຽບ ແລະ ກົດໝາຍທີ່ກ່ຽວຂ້ອງໃນການປົກປັກຮັກສາສິ່ງແວດລ້ອມ.	○	○
5	ຂີ້ເຫຍື້ອທີ່ສາມາດນຳກັບມາໃຊ້ຄືນໄດ້ ຕົວຢ່າງ: ຂວດນ້ຳດື່ມທີ່ໃຊ້ແລ້ວສາມາດເອົາມາເກັບນ້ຳປະປາໄວ້ໃຊ້ໄດ້.	○	○
6	ມີຂໍ້ມູນຂ່າວສານທາງດ້ານສິ່ງແວດລ້ອມທີ່ສາມາດຕອບສະໜອງໃຫ້ແກ່ນັກທ່ອງທ່ຽວ ແລະ ຊຸມຊົນທ້ອງຖິ່ນ.	○	○
7	ເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອະນຸຍາດໃຫ້ມີສານກາກບ໊ອນໄດອົກໄຊໜ້ອຍທີ່ສຸດ.	○	○
4	**ການຊຸກຍູ້ສົ່ງເສີມໃຫ້ມີການແລກປ່ຽນລະຫວ່າງຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ.**		
	4.1 ມີການແລກປ່ຽນລະຫວ່າງຊຸມຊົນທ້ອງຖິ່ນ ແລະ ນັກທ່ອງທ່ຽວ.	**ແມ່ນ**	**ບໍ່ແມ່ນ**
1	ຂໍ້ມູນກ່ຽວກັບສະພາບແວດລ້ອມ ແລະ ວັດທະນະທຳໄດ້ອະທິບາຍໃຫ້ນັກທ່ອງທ່ຽວ	○	○
2	ມີນະໂຍບາຍ ແລະ ການຈັດຕັ້ງປະຕິບັດຕົວຈິງເພື່ອຮັບປະກັນດ້ານຄວາມປອດໄພແກ່ນັກທ່ອງທ່ຽວ.	○	○
3	ມີກົດລະບຽບສຳຫຼັບຊຸມຊົນ, ເຈົ້າພາບ ແລະ ນັກທ່ອງທ່ຽວ.	○	○
4	ຄວາມຄາດຫວັງຂອງນັກທ່ອງທ່ຽວໄດ້ຮັບການບໍລິຫານຄຸ້ມຄອງຈາກຄະນະຮັບຜິດຊອບການທ່ອງທ່ຽວແບບ ມີສ່ວນຮ່ວມໃນຊຸມຊົນໂດຍຕ້ອງສະໜອງຂໍ້ມູນທີ່ຖືກຕ້ອງໃນເອກະສານການຕະຫຼາດ (ທາງອອນລາຍ ຫຼື ແຜ່ນພັບ/ໂປດສະເຕີໂຄສະນາ).	○	○
5	ມີລະບົບການຮັບເອົາຄຳຕິຕິຊົມຈາກນັກທ່ອງທ່ຽວກ່ຽວກັບປະສົບການທີ່ໄດ້ຮັບຈາກການທ່ອງທ່ຽວແບບ ປະຊາຊົນມີສ່ວນຮ່ວມ ເພື່ອປັບປຸງໃຫ້ດີຂຶ້ນ (ເຊັ່ນ: ເຮັດການສຳຫຼວດ, ການສຳພາດ, ມີປຶ້ມເພື່ອໃຫ້ນັກທ່ອງ ທ່ຽວປະກອບຄຳຄິດເຫັນ).	○	○
6	ມີໂຄງການ ການສື່ສານ ແລະ ສ້າງຄວາມເຂົ້າໃຈທາງດ້ານວັດທະນະທຳເຊິ່ງກັນ ແລະ ກັນ.	○	○

7	ເປີດໂອກາດໃຫ້ນັກທ່ອງທ່ຽວໄດ້ມີສ່ວນຮ່ວມເຮັດກິດຈະກຳຕ່າງໆຂອງຊຸມຊົນ ຮ່ວມກັບສະມາຊິກໃນຊຸມຊົນ.	○	○
8	ລະບົບການ ຮັບເອົາຄຳຕິຊົມຈາກນັກທ່ອງທ່ຽວ ມີການປະເມີນຜົນໃນແຕ່ລະອາທິດ ແລະ ຕ້ອງລາຍງານ ປະຈຳປີໃຫ້ກັບສະມາຊິກໃນຊຸມຊົນໄດ້ຮັບຊາບ.	○	○
	4.2 ຄວາມຍືນຍົງຂອງຜະລິດຕະພັນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	**ແມ່ນ**	**ບໍ່ແມ່ນ**
1	ການຕັ້ງລາຄາສິນຄ້າ ຫຼື ຜະລິດຕະພັນໃຫ້ມີຄວາມໂປ່ງໃສ ແລະ ຍຸດຕິທຳເໝາະສົມ.	○	○
2	ມີລາຍຮັບ ແລະ ຜົນຕອບແທນທີ່ຄຸ້ມຄ່າກັບຄືນຕໍ່ສັງຄົມ, ວັດທະນະທຳ, ສິ່ງແວດລ້ອມ ແລະ ເສດຖະກິດ ຂອງຊຸມຊົນ.	○	○
3	ໄດ້ມີການລະບຸກຸ່ມລູກຄ້າເປົ້າໝາຍ ແລະ ຄວາມຕ້ອງການຂອງແຕ່ລະກຸ່ມເປົ້າໝາຍ ເຊັ່ນ: ນັກທ່ອງທ່ຽວພາຍ ໃນ, ນັກທ່ອງທ່ຽວຕ່າງປະເທດ ແລະ ຄວາມຕ້ອງການຂອງເຂົາເຈົ້າ.	○	○
4	ມີຜະລິດຕະພັນ ແລະ ການບໍລິການທີ່ເປັນເອກະລັກ, ສິ່ງເສີມຄຸນຄ່າທາງວັດທະນະທຳ ແລະ ສິ່ງແວດລ້ອມ ແລະ ເໝາະສົມ ທີ່ຈະສະໜອງໄດ້ຕາມຄວາມຕ້ອງການຂອງນັກທ່ອງທ່ຽວ.	○	○
5	ມີແຜນການຕະຫຼາດ ແລະ ລາຄາທີ່ສົມເຫດສົມຜົນ ທີ່ຈະເປັນການດຶງດູດກຸ່ມນັກທ່ອງທ່ຽວເປົ້າໝາຍ.	○	○
5	**ການທ່ອງທ່ຽວ ແລະ ການບໍລິການນຳທ່ຽວທີ່ມີຄຸນນະພາບ.**		
	5.1 ການຮັບປະກັນຄຸນນະພາບ ແລະ ຄວາມຊຳນານຂອງພະນັກງານນຳທ່ຽວ.	**ແມ່ນ**	**ບໍ່ແມ່ນ**
1	ພະນັກງານນຳທ່ຽວທີ່ໄດ້ຜ່ານການຝຶກອົບຮົມ ແລະ ຄັດເລືອກເອົາຕາມລະດັບຄວາມຮູ້ຄວາມສາມາດ, ສະພາບຮ່າງກາຍ ແລະ ຄວາມແຂງແຮງ ເພື່ອຮອງຮັບການນຳທ່ຽວໃນແຕ່ລະກິດຈະກຳໄດ້.	○	○
2	ພະນັກງານນຳທ່ຽວມີຄວາມຮູ້ທາງດ້ານວັດທະນະທຳ ແລະ ສະພາບແວດລ້ອມຂອງທ້ອງຖິ່ນທີ່ລວມເຖິງ ປະຫວັດຄວາມເປັນມາ, ຮີດຄອງປະເພນີ, ພູມສັນຖານ, ພືກສາຊາດ ແລະ ສັດສາວສິ່ງ ແລະ ສະຖານທີ່ ວັດທະນະທຳ/ມໍລະດົກ ແລະ ຫຼັກການທ່ອງທ່ຽວແບບຍືນຍົງ.	○	○
3	ພະນັກງານນຳທ່ຽວຕ້ອງປະຕິບັດຕາມມາດຕະຖານການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ.	○	○
4	ພະນັກງານນຳທ່ຽວຕ້ອງໄດ້ຮັບການຝຶກອົບຮົມ ແລະ ຢັ້ງຢືນຈາກ ກະຊວງ ຖວທ/ພະແນກ ຖວທ ຫຼື ບັນດາ ພາກສ່ວນທີ່ກ່ຽວຂ້ອງ.	○	○
5	ພະນັກງານນຳທ່ຽວ ນຳພານັກທ່ອງທ່ຽວທ່ຽວຊົມທຳມະຊາດສິ່ງແວດລ້ອມ, ວັດທະນະທຳ ໂດຍຕ້ອງປົກປັກ ຮັກສາຊັບພະຍາກອນ ແລະ ອະນຸລັກຄຸນຄ່າທາງວັດທະນະທຳ ແລະ ທຳມະຊາດດັ່ງກ່າວ.	○	○
6	ພະນັກງານນຳທ່ຽວໄດ້ເຂົ້າຮ່ວມການຝຶກອົບຮົມ ດ້ານສ້າງຄວາມເຂັ້ມແຂງຢ່າງຕໍ່ເນື່ອງເພື່ອເພີ່ມທັກສະ ແລະ ຄວາມຮູ້ຕ່າງໆເຊັ່ນ: • ການທ່ອງທ່ຽວແບບຍືນຍົງ. • ການອະທິບາຍຄວາມໝາຍຄວາມສຳຄັນ. • ການບໍລິຫານວຽກງານເປັນກຸ່ມ. • ການບໍລິການ/ເອົາໃຈໃສ່ລູກຄ້າ. • ການສື່ສານ (ລວມເຖິງການຮັບຮູ້/ຄວາມເຂົ້າໃຈວັດທະນະທຳຕ່າງໆ ແລະ ການສື່ສານທາງດ້ານພາສາ). • ການປະຖົມພະຍາບານເບື້ອງຕົ້ນ ແລະ ຄວາມປອດໄພ.	○	○

	• ວັດທະນະທຳຮີດຄອງປະເພນີທີ່ແທ້ຈິງຂອງທ້ອງຖິ່ນ, ຄວາມຊື່ສັດ, ເອກະລັກ ແລະ ຄຸນຄ່າ,ການປົກປັກຮັກສາສິ່ງແວດລ້ອມ. • ຕ້ອງກຳໄດ້ເງື່ອນໄຂ ແລະ ກົດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ແລະ ຂົງເຂດອື່ນໆທີ່ເຫັນວ່າມີຄວາມຈຳເປັນຕາມການເຫັນດີຂອງຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.		
	5.2 ຄຸນນະພາບຂອງລາຍການທ່ອງທ່ຽວ ແລະ ກິດຈະກຳຕ່າງໆ	**ແມ່ນ**	**ບໍ່ແມ່ນ**
1	ການດຳເນີນທຸລະກິດທ່ອງທ່ຽວ/ກິດຈະກຳຕ່າງໆຕ້ອງສອດຄ່ອງກັບຈຸດປະສົງ, ປຶດແນະນຳ, ກົດລະບຽບ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
2	ລາຍການທ່ອງທ່ຽວ/ກິດຈະກຳຕ່າງໆຕ້ອງຮັບປະກັນການມີສ່ວນຮ່ວມລະຫວ່າງນັກທ່ອງທ່ຽວກັບຊຸມຊົນທ້ອງຖິ່ນ ເພື່ອໃຫ້ມີການແລກປ່ຽນປະສົບການທາງດ້ານວັດທະນະທຳ, ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ໃນຊຸມຊົນ.	○	○
3	ລາຍການທ່ອງທ່ຽວ/ກິດຈະກຳໄດ້ກຳນົດໄວ້ຢ່າງຊັດເຈນ: • ລາຍລະອຽດຂອງການນຳທ່ຽວ ແລະ ການກຳນົດລາຄາ; ແລະ • ມີການສັ່ງຈອງ ແລະ ໄດ້ຮັບການບັນທຶກຢ່າງເປັນລະບົບ.	○	○
4	ລາຍການທ່ອງທ່ຽວ/ກິດຈະກຳທ່ອງທ່ຽວໄດ້ບັນທຶກຈຳນວນ ແລະ ຊື່ຂອງນັກທ່ອງທ່ຽວ, ເວລາໄປຮັບ ແລະ ໄປສົ່ງ.	○	○
5	ນັກທ່ອງທ່ຽວໄດ້ຮັບຊາບກ່ຽວກັບລາຍການເດີນທາງ, ລະດັບຄວາມຍາກລຳບາກ, ຄວາມອັນຕະລາຍທີ່ອາດເກີດຂຶ້ນ, ຄວາມປອດໄພ ແລະ ກົດລະບຽບ ຫຼື ຂໍ້ບັງຄັບທີ່ໃຊ້ໃນການເດີນທາງທ່ອງທ່ຽວ.	○	○
6	ຜູ້ປະກອບການທຸລະກິດນຳທ່ຽວຕ້ອງດຳເນີນງານບົນພື້ນຖານການໃຫ້ຜົນຕອບແທນ ແລະ ຜົນປະໂຫຍດແກ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
7	ມີລະບົບຄວບຄຸມ ແລະ ປັບປຸງຄຸນນະພາບ ລວມທັງມີລະບົບການຮັບຄຳຕຳນິຕິຊົມຈາກນັກທ່ອງທ່ຽວຕໍ່ກິດຈະກຳທ່ອງທ່ຽວທີ່ຊຸກຍູ້ນັກທ່ອງທ່ຽວໃຫ້ຄວາມຮ່ວມມືໃນການໃຫ້ຄຳແນະນຳ ຫຼື ຕິຊົມເພື່ອສົ່ງເສີມໃຫ້ການບໍລິການທ່ອງທ່ຽວ/ກິດຈະກຳດີຂຶ້ນ.	○	○
8	ລາຍການທ່ອງທ່ຽວ ຫຼື ບັນດາກິດຈະກຳຕ່າງໆຕ້ອງສອດຄ່ອງ ແລະ ຊ່ວຍສົ່ງເສີມການປົກປັກຮັກສາວັດທະນະທຳອັນດີງາມຂອງທ້ອງຖິ່ນ ແລະ ຊັບພະຍາກອນທຳມະຊາດ.	○	○
9	ລາຍການທ່ອງທ່ຽວ/ກິດຈະກຳທ່ອງທ່ຽວແມ່ນຖືກສ້າງຂຶ້ນເພື່ອຄວາມເພີດເພີນ, ເພື່ອການສຶກສາ, ການແລກປ່ຽນ, ການມີສ່ວນຮ່ວມ, ເພື່ອການພັດທະນາ, ການເຊື່ອມໂຍງ ແລະ ການອະນຸລັກ.	○	○
10	ພະນັກງານນຳທ່ຽວຂັ້ນທ້ອງຖິ່ນ 1 ຄົນສາມາດໃຫ້ບໍລິການແຂກໄດ້ 10 ຄົນ.	○	○
11	ລາຍການທ່ອງທ່ຽວ/ກິດຈະກຳທີ່ກ່ຽວຂ້ອງຕ້ອງມີສັນຍາທີ່ລະບຸ ແລະ ບັນທຶກໄວ້ຢ່າງຊັດເຈນວ່າເປັນບໍລິສັດທ່ອງທ່ຽວພາຍໃນ.	○	○
12	ລາຍການທ່ອງທ່ຽວ/ກິດຈະກຳທ່ອງທ່ຽວ ແມ່ນອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນວັດທະນະທຳ ແລະ ເປີດໂອກາດໃຫ້ນັກທ່ອງທ່ຽວໄດ້ປະກອບເຮັດກິດຈະກຳຮ່ວມກັບສະມາຊິກໃນຊຸມຊົນນັ້ນໆ.	○	○

13	ການຈັດການການນຳທ່ຽວແມ່ນມີຄວາມເໝາະສົມ ແລະ ມີຄວາມເອົາໃຈໃສ່ໃນການບໍລິການທີ່ມີຄວາມຊຳນານເປັນພິເສດ ເພື່ອໃຫ້ໄດ້ຕາມຄວາມຕ້ອງການຂອງລູກຄ້າເປົ້າໝາຍ ແລະ ດຶງດູດນັກທ່ອງທ່ຽວທີ່ມີຄຸນນະພາບໃຫ້ຫລາຍ.	○	○
6	**ຄຸນນະພາບຂອງການບໍລິການອາຫານ ແລະ ເຄື່ອງດື່ມ.**		
	6.1 ຮັບປະກັນຄຸນນະພາບຂອງຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມ.	**ແມ່ນ**	**ບໍ່ແມ່ນ**
1	ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມ ແມ່ນຕ້ອງມີຄວາມເໝາະສົມ ທາງດ້ານຄວາມຮູ້ ແລະ ປະສົບການທີ່ຕິດພັນກັບການບໍລິການອາຫານ ແລະ ເຄື່ອງດື່ມທີ່ກ່ຽວຂ້ອງກັບທ້ອງຖິ່ນ.	○	○
2	ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມ ຕ້ອງປຸງແຕ່ງອາຫານ ແລະ ໃຫ້ການບໍລິການທີ່ຖືກຫຼັກສຸຂະອະນາໄມ.	○	○
3	ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງປະຕິບັດຕາມບົດແນະນຳ ແລະ ກົດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ	○	○
4	ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໄດ້ຜ່ານການຮັບຮອງພາຍໃຕ້ມາດຕະຖານທີ່ກ່ຽວຂ້ອງ	○	○
5	ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມໄດ້ແລກປ່ຽນຄວາມຮູ້ໃໝ່ຢູ່ສະເໝີຈາກແຂກຜູ້ມາໃຊ້ບໍລິການ.	○	○
6	ຜູ້ປະກອບການບໍລິການອາຫານ ແລະ ເຄື່ອງດື່ມຕ້ອງໄດ້ເຂົ້າຮ່ວມໃນການຝຶກອົບຮົມເພື່ອເພີ່ມທັກສະ ແລະ ຄວາມຮູ້ດ້ານ: • ສຸຂະອະນາໄມໃນຂັ້ນຕອນການກະກຽມປຸງແຕ່ງອາຫານ. • ໂພຊະນາການ ແລະ ການຈັດກຽມລາຍການອາຫານ. • ອາຫານພື້ນບ້ານ ແລະ ເຕັກນິກການປຸງແຕ່ງອາຫານ. • ມາດຕະຖານການບໍລິການ ແລະ ການຕ້ອນຮັບ. • ການທ່ອງທ່ຽວແບບຍືນຍົງ. • ການບໍລິຫານວຽກງານເປັນກຸ່ມ. • ການບໍລິການ/ການເອົາໃຈໃສ່ລູກຄ້າ. • ການສື່ສານ (ລວມເຖິງການຮັບຮູ້ວັດທະນະທຳ/ຄວາມເຂົ້າໃຈວັດທະນະທຳຕ່າງໆ ແລະ ການສື່ສານທາງພາສາ), • ການປະຖົມພະຍາບານເບື້ອງຕົ້ນ ແລະ ຄວາມປອດໄພ, • ຄວາມເປັນວັດທະນະທຳຮີດຄອງປະເພນີທີ່ແທ້ຈິງ, ມີຄວາມອຸດົມສົມບູນ, ມີເອກະລັກ ແລະ ມີຄຸນຄ່າ • ມີການປົກປັກຮັກສາສິ່ງແວດລ້ອມ. • ມີການແນະນຳ ແລະ ປະຕິບັດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. • ຫົວຂໍ້ອື່ນໆ ທີ່ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນສ່ວນຮ່ວມເຫັນວ່າມີຄວາມສຳຄັນ/ຈຳເປັນ.	○	○
	6.2 ຄຸນນະພາບຂອງການບໍລິການອາຫານ ແລະ ເຄື່ອງດື່ມ.	**ແມ່ນ**	**ບໍ່ແມ່ນ**
1	ການບໍລິການອາຫານ ແລະ ເຄື່ອງດື່ມ ແມ່ນປະຕິບັດຕາມຈຸດປະສົງ, ຄຳແນະນຳ, ລະບຽບ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○

2	ລາຍການອາຫານທຸກຢ່າງຕ້ອງບອກລາຄາທີ່ຈະແຈ້ງ ແລະ ລະອຽດຢູ່ປຶ້ມລາຍການອາຫານ (ຖ້າມີ)	○	○
3	ອາຫານສາມາດບໍລິການໃຫ້ລູກຄ້າ ໄດ້ຕາມກຳນົດເວລາທີ່ໄດ້ຕົກລົງກັນລະຫວ່າງຜູ້ໃຫ້ບໍລິການອາຫານ ແລະ ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
4	ມີອາຫານພຽງພໍໄວ້ບໍລິການຕາມຄວາມຕ້ອງການຂອງນັກທ່ອງທ່ຽວລວມທັງອາຫານວ່າງ.	○	○
5	ລາຍການອາຫານແຕກຕ່າງກັນໃນແຕ່ລະມື້ ແລະ ມີອາຫານພື້ນບ້ານຢ່າງໜ້ອຍໜຶ່ງເຍື່ອງໃນແຕ່ລະຄາບ.	○	○
6	ອາຫານຕ້ອງສົດ, ປອດສານພິດ ແລະ ປຸງແຕ່ງດ້ວຍວັດຖຸດິບຂອງທ້ອງຖິ່ນເຊັ່ນ: ຊີ້ນ ແລະ ຜັກສົດ, ແຕ່ບໍ່ມີສັດປ່າທີ່ຜິດກົດໝາຍ.	○	○
7	ອາຫານແຕ່ລະຄາບ ຕ້ອງມີຂອງຫວານ ແລະ ໝາກໄມ້.	○	○
8	ການກະກຽມປຸ່ງແຕ່ງອາຫານ ແລະ ບ່ອນປຸງແຕ່ງອາຫານຕ້ອງສະອາດ.	○	○
9	ອຸປະກອນຕ່າງໆ ທີ່ນຳໃຊ້ປຸງແຕ່ງອາຫານຕ້ອງທຳຄວາມສະອາດ ກ່ອນ ແລະ ຫຼັງປຸງແຕ່ງທຸກຄັ້ງ	○	○
10	ຜູ້ປຸງແຕ່ງອາຫານຕ້ອງລ້າງມືດ້ວຍນ້ຳຢາລ້າງມືໃຫ້ສະອາດທຸກຄັ້ງກ່ອນ ແລະ ຂະນະປຸງແຕ່ງອາຫານ.	○	○
11	ຄວນເກັບຮັກສາອາຫານໄວ້ບ່ອນທີ່ສະອາດ ແລະ ຖືກສຸຂະອະນາໄມ.	○	○
12	ບໍ່ໃຫ້ມີສັດລ້ຽງເຂົ້າມາໃນເຮືອນຄົວໃນເວລາປຸງແຕ່ງອາຫານ.	○	○
13	ນັກທ່ອງທ່ຽວສາມາດສ້າງປະສົບການທີ່ດີໃນການຮຽນຮູ້ ແລະ ທົດລອງການປຸງແຕ່ງອາຫານພື້ນບ້ານ.	○	○
14	ລະບົບຄວບຄຸມ ແລະ ປັບປຸງຄຸນນະພາບໃຫ້ດີຂຶ້ນ ເຊັ່ນ: ການຮັບເອົາຄຳຕຳນິຕິຊົມ ຈາກນັກທ່ອງທ່ຽວກ່ຽວກັບປະສົບການໃນການ ຮັບປະທານອາຫານ ແລະ ຄຳແນະນຳຕ່າງໆຈາກນັກທ່ອງທ່ຽວທີ່ມາໃຊ້ບໍລິການ.	○	○
15	ມີລາຍການອາຫານພິເສດສຳລັບນັກທ່ອງທ່ຽວທີ່ຕ້ອງການຄວບຄຸມການກິນອາຫານ.	○	○
16	ການຫຸ້ມຫໍ່ອາຫານຄວນຫຼີກລ້ຽງການນຳໃຊ້ວັດສະດຸ ທີ່ບໍ່ເປັນມິດຕໍ່ສິ່ງແວດລ້ອມ, ຄວນເລືອກໃຊ້ວັດຖຸດິບຈາກທຳມະຊາດ ເຊັ່ນ: ໃບຕອງ.	○	○
7	**ຄຸນນະພາບຂອງສະຖານທີ່ພັກເຊົ່າ.**		
	7.1 ຮັບປະກັນຄຸນນະພາບຂອງສະຖານທີ່ພັກເຊົ່າ.	**ແມ່ນ**	**ບໍ່ແມ່ນ**
1	ຜູ້ໃຫ້ບໍລິການສະຖານທີ່ພັກເຊົ່າ ຄວນມີຄວາມຮູ້ພື້ນຖານທີ່ດີໃນການບໍລິການ ແລະ ມີສິ່ງອຳນວຍຄວາມສະດວກທີ່ເໝາະສົມ	○	○
2	ຜູ້ໃຫ້ບໍລິການສະຖານທີ່ພັກເຊົ່າຕ້ອງໄດ້ພັດທະນາໂຕເອງເຊັ່ນ: ຄວາມຮູ້, ວິທີການໃຫ້ບໍລິການທີ່ມີຄຸນນະພາບ ແລະ ການຮັກສາສະພາບແວດລ້ອມໃນທ້ອງຖິ່ນ, ວັດທະນະທຳ ແລະ ປະສົບການການທ່ອງທ່ຽວໃຫ້ມີຄວາມຍືນຍົງ.	○	○
3	ຜູ້ໃຫ້ບໍລິການທີ່ພັກເຊົ່າຕ້ອງປະຕິບັດຕາມກົດລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ອາຊຽນ	○	○
4	ຜູ້ໃຫ້ບໍລິການທີ່ພັກເຊົ່າຕ້ອງຊຸກຍູ້ໃຫ້ແຂກໄດ້ຮັບປະສົບການວິຖີຊີວິດຂອງຊຸມຊົນ ແລະ ແລກປ່ຽນຄວາມຮູ້ລະຫວ່າງແຂກກັບເຈົ້າພາບ	○	○
5	ຜູ້ໃຫ້ບໍລິການທີ່ພັກເຊົ່າໄດ້ຮັບການຢັ້ງຢືນຈາກກາພາກສ່ວນທີ່ກ່ຽວຂ້ອງ	○	○

6	7.1.1. ໃຫ້ບໍລິການທີ່ພັກເຊົ່າໄດ້ຕ້ອງໄດ້ເຂົ້າຮ່ວມໃນການຝຶກອົບຮົມເພື່ອເພີ່ມທັກສະ ແລະ ຄວາມຮູ້ດ້ານການໃຫ້ບໍລິການສະຖານທີ່ພັກເຊົ່າດ້ານ: • ການບໍລິການສະຖານທີ່ພັກເຊົ່າ ແລະ ແມ່ເຮືອນ. • ການກະກຽມອາຫານໃຫ້ຖືກຫຼັກສຸຂະອະນາໄມ. • ມາດຕະຖານການຕ້ອນຮັບ ແລະ ການບໍລິການ. • ການທ່ອງທ່ຽວແບບຍືນຍົງ. • ການບໍລິຫານວຽກງານເປັນກຸ່ມ. • ການບໍລິການ/ເອົາໃຈໃສ່ລູກຄ້າ. • ການສື່ສານ (ລວມທັງການຮັບຮູ້/ຄວາມເຂົ້າໃຈດ້ານວັດທະນະທຳທີ່ແຕກຕ່າງກັນ ແລະ ການສື່ສານທາງພາສາ). • ການປະຖົມພະຍາບານເບື້ອງຕົ້ນ ແລະ ຄວາມປອດໄພ. • ການນັບຖືວັດທະນະທຳ, ປະເພນີທ້ອງຖິ່ນ, ການເຊື່ອມໂຍງ, ເອກະລັກ ແລະ ຄຸນຄ່າ. • ການປົກປັກຮັກສາສິ່ງແວດລ້ອມ. • ບົດແນະນຳ ແລະ ລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ. • ສິ່ງອື່ນໆທີ່ເຫັນວ່າມີຄວາມຈຳເປັນຈາກຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○
	7.2 ການບໍລິຫານຄຸ້ມຄອງເພື່ອຮັບປະກັນຄຸນນະພາບຂອງສະຖານທີ່ພັກເຊົ່າ.	**ແມ່ນ**	**ບໍ່ແມ່ນ**
1	ສະຖານທີ່ພັກເຊົ່າແມ່ນໄດ້ຕາມຈຸດປະສົງ, ບົດແນະນຳ, ລະບຽບການ ແລະ ຫລັກການຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
2	ມີລະບົບການຈອງທີ່ພັກເຊົ່າທີ່ລະອຽດ	○	○
3	ມີການບັນທຶກການເດີນທາງເຂົ້າ - ອອກຂອງນັກທ່ອງທ່ຽວທີ່ມາໃຊ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
4	ເວລານັກທ່ອງທ່ຽວມາຮອດຈະໄດ້ຮັບຂໍ້ມູນກ່ຽວກັບ ຄວາມປອດໄພ, ລະບົບການຮັກສາຄວາມປອດໄພ ແລະ ຄຳແນະນຳດ້ານການປະພຶດຕ່າງໆ ສິ່ງທີ່ຄວນເຮັດ-ບໍ່ຄວນເຮັດ	○	○
5	ສິ່ງອຳນວຍຄວາມສະດວກຕ່າງໆທີ່ໄດ້ປຸກສ້າງຂຶ້ນ ຕ້ອງມີຄວາມໜ້າສົນໃຈ, ປອດໄພ ແລະ ສອດຄ່ອງກັບຄວາມຕ້ອງການຂອງແຂກ.	○	○
6	ຫ້ອງອາບນ້ຳ ແລະ ຫ້ອງນ້ຳຕ້ອງມີຄວາມເປັນສ່ວນຕົວ ແລະ ມີບ່ອນລະບາຍອາກາດໄດ້ດີ, ໂດຍບໍ່ໃຫ້ໃຊ້ຮ່ວມກັບສະມາຊິກໃນຄອບຄົວຂອງຜູ້ໃຫ້ບໍລິການ.	○	○
7	ຫ້ອງພັກທັງຫມົດ, ໂດຍສະເພາະແມ່ນ ຫ້ອງອາບນ້ຳ ແລະ ຫ້ອງນ້ຳຕ້ອງອະນາໄມໃຫ້ສະອາດທຸກມື້	○	○
8	ຫ້ອງອາບນ້ຳ ແລະ ຫ້ອງນ້ຳຄວນມີອ່າງເກັບນ້ຳທີ່ພຽງພໍ, ນ້ຳສະອາດ, ສະບູ ແລະ ຈອກ; ສ່ວນຫ້ອງນ້ຳຄວນມີເຈ້ຍອະນາໄມ ແລະ ຖັງໃສ່ຂີ້ເຫຍື້ອ	○	○
9	ຫ້ອງນ້ຳມີທັງແບບນັ່ງຢອງຢໍ້ ຫຼື ແບບນັ່ງ ແລະ ສາມາດດູດອອກ ຫຼື ຍ່ອຍສະຫຼາຍໄດ້ຕາມຄວາມເໝາະສົມຂອງແຕ່ລະທ້ອງຖິ່ນ	○	○

10	ພື້ນທີ່ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຕ້ອງມີຄວາມສະອາດງາມຕາເພື່ອປ້ອງກັນບໍ່ໃຫ້ມີແມງໄມ້ ຫຼື ສັດສາວສິ່ງທີ່ເປັນອັນຕະລາຍເຂົ້າມາ	○	○
11	ມີຂໍ້ມູນຂ່າວສານໃນຫຼາຍໆພາສາເພື່ອໃຫ້ແຂກມາພັກເຊົ່າສາມາດສື່ສານກັບເຈົ້າຜູ້ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໄດ້.	○	○
12	ສະຖານທີ່ພັກເຊົາທຸກແຫ່ງຕ້ອງມີໄຟສາຍ ຫຼື ສິ່ງອື່ນໆໄວ້ໃຫ້ແຂກໃຊ້	○	○
13	ທຸກກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຕ້ອງມີວິທີຮັບປະກັນຄວາມປອດໄພ ແລະ ຄວາມສະຫງົບໃຫ້ແກ່ນັກທ່ອງທ່ຽວ (ນັກທ່ອງທ່ຽວໄດ້ຮັບຮູ້ຂໍ້ມູນເຫລົ່ານີ້ໃນເວລາເດີນທາງມາຮອດ)	○	○
14	ຕ້ອງມີແຜນການຮອງຮັບສຳລັບເຫດການທີ່ບໍ່ຄາດຄິດທີ່ອາດເກີດຂຶ້ນ ເຊັ່ນ: ກໍລະນີນັກທ່ອງທ່ຽວເຈັບປ່ວຍ, ມີພຶດຕິກຳທີ່ບໍ່ພຶງປະສົງຈາກບຸກຄົນທົ່ວໄປ, ອຸບັດຕິເຫດ ຫລື ບາດເຈັບ ຫຼື ສະພາບອາກາດມີການປ່ຽນແປງ	○	○
15	ທີ່ພັກ ແລະ ພື້ນທີ່ໃນການເຮັດກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຄວນມີເຄື່ອງມືປະຖົມພະຍາບານ ສຳລັບແຂກ ແລະ ພະນັກງານນຳໃຊ້ ແລະ ກວດກາທຸກໆອາທິດເພື່ອໃຫ້ມີຄົບຖ້ວນ.	○	○
16	ພັກ ແລະ ພື້ນທີ່ໃນການເຮັດກິດຈະກຳການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ຄວນໃຊ້ມາດຕະຖານຄືກັນທັງຫມົດ ເຊັ່ນ: ການຮັກສາອະນາໄມ, ການບໍລິການອາຫານ ແລະ ເຄື່ອງດື່ມ	○	○
17	ມີລະບົບຮັກສາຄວບຄຸມຄຸນນະພາບ ແລະ ການປັບປຸງການບໍລິການ ລວມທັງ ຄຳຄິດຄຳເຫັນຕໍ່ກັບສະຖານທີ່ພັກແຮມ ແລະ ໃຫ້ນັກທ່ອງທ່ຽວໄດ້ມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນເພື່ອປັບປຸງຄຸນນະພາບ	○	○
18	ໂຄງສ້າງຂອງ ທີ່ພັກອາໄສຕ້ອງເຮັດຕາມຮູບຊົງຂອງທ້ອງຖິ່ນ	○	○
19	ສິ່ງປຸກສ້າງຕ່າງໆທີ່ໃຫ້ບໍລິການແກ່ນັກທ່ອງທ່ຽວຕ້ອງມີການກຳນົດຂອບເຂດຢ່າງລະອຽດ ໂດຍມີປ້າຍບອກ ແລະ ຮູບໂປດສະເຕີ້.	○	○
20	ບໍລິເວນສິ່ງປຸກສ້າງຕ້ອງບໍ່ມີການຕົກແຕ່ງຈາກຊິ້ນສ່ວນຂອງສັດປ່າ ຍົກເວັ້ນບ່ອນທີ່ຈັດສະແດງສັດ ຫຼື ສະເພາະນັກທ່ອງທ່ຽວພາຍໃນ	○	○
21	ພາຍໃນສິ່ງປຸກສ້າງຕ້ອງມີແສງສະຫວ່າງພຽງພໍ ແລະ ມີອາກາດຖ່າຍເທສະດວກ	○	○
22	ສິ່ງປຸກສ້າງຕ່າງໆຕ້ອງຫ່າງຈາກສະຖານທີ່ທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດອື່ນໆຢ່າງໜ້ອຍ 20 ແມັດ, ເວັ້ນເສຍແຕ່ມີເຫດຜົນອື່ນທີ່ຈຳເປັນ	○	○
23	ສະຖານທີ່ໃຫ້ບໍລິການແກ່ນັກທ່ອງທ່ຽວບໍ່ຄວນປ່ອຍສັດລ້ຽງເຂົ້າມາລົບກວນ	○	○
24	ມີສະຖານທີ່ຈອດລົດ, ປ້າຍຊີ້ບອກຕ່າງໆສຳລັບນັກທ່ອງທ່ຽວ ແລະ ຜູ້ທີ່ມາທັດສະນະສຶກສາ ໃນຂອບເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
25	ຜູ້ທີ່ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມຕ້ອງໄດ້ຮັບການຝຶກອົບຮົມດ້ານການປະຖົມພະຍາບານເບື້ອງຕົ້ນເພື່ອໃຫ້ສາມາດຊ່ວຍເຫຼືອນັກທ່ອງທ່ຽວໃນກໍລະນີສຸກເສີນໄດ້	○	○
26	ຜູ້ໃຫ້ບໍລິການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມທັງໝົດ ແລະ ນັກທ່ອງທ່ຽວທີ່ມາໃຊ້ບໍລິການຕ້ອງມີເອກະສານແນະນຳກ່ຽວກັບການແກ້ໄຂບັນຫາເບື້ອງຕົ້ນ, ລະບຸຕຳແໜ່ງອຸປະກອນສຸກເສີນຕ່າງໆ ໃຫ້ຊັດເຈນ	○	○
27	ເນັ້ນໜັກໃຫ້ນັກທ່ອງທ່ຽວໄດ້ຮຽນຮູ້ປະສົບການຂອງການຢູ່ແບບຄອບຄົວ ແລະ ຮຽນຮູ້ວັດທະນະທຳທ້ອງຖິ່ນ	○	○
8	**ການຈັດຕັ້ງປະຕິບັດຂອງບໍລິສັດທ່ອງທ່ຽວ.**		

	8.1 ພັນທະຂອງຜູ້ປະກອບການທຸລະກິດທ່ອງທ່ຽວຕໍ່ກັບການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ	ແມ່ນ	ບໍ່ແມ່ນ
1	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງໄດ້ມາດຕະຖານທີ່ກ່ຽວຂ້ອງຈາກພາກສ່ວນທີ່ກ່ຽວຂ້ອງ	○	○
2	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງມີໃບອະນຸຍາດດຳເນີນທຸລະກິດ	○	○
3	ມີສັນຍາເປັນລາຍລັກອັກສອນຢ່າງລະອຽດລະຫວ່າງຜູ້ປະກອບການທ່ອງທ່ຽວ ແລະ ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
4	ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງເຊັນສັນຍາ ແລະ ປະຕິບັດຕາມກົດລະບຽບ ຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມອາຊຽນ	○	○
5	ໃຫ້ຜູ້ປະກອບການທຸລະກິດທ່ອງທ່ຽວເຂົ້າເປັນສະມາຊິກຂອງອົງກອນວິຊາຊີບໃດໜຶ່ງ ຕາມຄວາມເໝາະສົມ	○	○
6	ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງໄດ້ພັດທະນາຄວາມຮູ້ດ້ານການທ່ອງທ່ຽວແບບຍືນຍົງ ແລະ ວິທີບໍລິການທີ່ມີຄຸນນະພາບທີ່ກ່ຽວຂ້ອງກັບສະພາບແວດລ້ອມ, ວັດທະນະທຳ ແລະ ການດຳລົງຊີວິດໃນທ້ອງຖິ່ນ	○	○
7	ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານທີ່ໃຫ້ບໍລິການຕ້ອງມີຄວາມຮັບຜິດຊອບຕໍ່ນັກທ່ອງທ່ຽວເພື່ອໃຫ້ນັກທ່ອງທ່ຽວໄດ້ມີປະສົບການຈາກວິຖີຊີວິດທ້ອງຖິ່ນ ແລະ ແລກປ່ຽນຄວາມຮູ້ຊຶ່ງກັນ ແລະ ກັນລະຫວ່າງຊຸມຊົນ ແລະ ນັກທ່ອງທ່ຽວ	○	○
8	ຜູ້ປະກອບການທຸລະກິດທ່ອງທ່ຽວໄດ້ຈັດຊຸດຝຶກອົບຮົມໃຫ້ພະນັກງານທີ່ກ່ຽວຂ້ອງກ່ຽວກັບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
9	ຜູ້ປະກອບການທຸລະກິດທ່ອງທ່ຽວມີການຮ່ວມມືກັບອົງກອນ, ອຳນາດການປົກຄອງ ແລະ ອົງການທີ່ບໍ່ສັງກັດລັດ ທີ່ອະນຸລັກມໍລະດົກທຳມະຊາດ ແລະ ວັດທະນະທຳ	○	○
	8.2 ການມີສ່ວນຮ່ວມຂອງຜູ້ປະກອບການທຸລະກິດ ທ່ອງທ່ຽວຕໍ່ກັບຊຸມຊົນ ແລະ ການປົກປັກຮັກສາທຳມະຊາດ.	ແມ່ນ	ບໍ່ແມ່ນ
1	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງເຄົາລົບລະບຽບຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
2	ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງມີຄວາມຮູ້ ແລະ ຄວາມເຂົ້າໃຈດີກ່ຽວກັບພື້ນທີ່ການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຮີດຄອງປະເພນີທ້ອງຖິ່ນ	○	○
3	ຜູ້ປະກອບການທຸລະກິດທ່ອງທ່ຽວ ຕ້ອງສະແດງໃຫ້ເຫັນເຖິງການດຳເນີນງານໃນການປົກປັກຮັກສາສິ່ງແວດລ້ອມ	○	○
4	ຜູ້ປະກອບການທຸລະກິດທ່ອງທ່ຽວຄວນຫຼຸດຜ່ອນການນຳໃຊ້ເຄື່ອງຈັກໃນການຂົນສົ່ງ, ໂດຍສະເພາະແມ່ນ ຢູ່ໃນເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ.	○	○

5	ຜູ້ປະກອບການທຸລະກິດທ່ອງທ່ຽວຄວນປຶກສາຫາລື ກັບ ຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ຊຸມຊົນ ໃນກໍລະນີມີຄວາມສ່ຽງທີ່ອາດສົ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊຸມຊົນທ້ອງຖິ່ນໂດຍກົງ.	○	○
6	ຜູ້ປະກອບການທຸລະກິດທ່ອງທ່ຽວບໍ່ຄວນນຳໃຊ້ຜະລິດຕະພັນທີ່ກໍ່ໃຫ້ເກີດຜົນກະທົບຕໍ່ສິ່ງແວດລ້ອມ ເຂົ້າມາໃນພື້ນທີ່ການທ່ອງທ່ຽວປະຊາຊົນມີສ່ວນຮ່ວມ	○	○
7	ຜູ້ປະກອບການທຸລະກິດທ່ອງທ່ຽວທີ່ດີຄວນມີວິທີການຫຼຸດຜ່ອນຜົນກະທົບທີ່ອາດຈະເກີດຂຶ້ນຕໍ່ທຳມະຊາດ, ວັດທະນະທຳ ແລະ ຊຸມຊົນທ້ອງຖິ່ນ	○	○
8	ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ພະນັກງານຕ້ອງມີສ່ວນຮ່ວມ ຫຼື ປະກອບສ່ວນເຂົ້າໃສ່ບັນດາໂຄງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
9	ຜູ້ປະກອບການທ່ອງທ່ຽວ ຄວນມີການເຮັດວຽກຮ່ວມກັບຊຸມຊົນທ້ອງຖິ່ນໃນການປັບປຸງການບໍລິການຂອງຊຸມຊົນ ແລະ ຜະລິດຕະພັນຕ່າງໆ ໂດຍອີງໃສ່ ຄຳຄິດຄຳເຫັນຂອງນັກທ່ອງທ່ຽວ	○	○
10	ຜູ້ປະກອບການທຸລະກິດທ່ອງທ່ຽວໄດ້ສະໜັບສະໜຸນຄະນະກຳມະການການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມໃນການຝຶກອົບຮົມພະນັກງານນຳທ່ຽວທ້ອງຖິ່ນ ແລະ ພະນັກງານອະນຸລັກສັດປ່າຈາກຄົນທ້ອງຖິ່ນທີ່ມີຄວາມຊຳນານ	○	○
11	ຖ້າເປັນໄປໄດ້, ຜູ້ປະກອບການທຸລະກິດທ່ອງທ່ຽວຄວນນຳໃຊ້ສະຖານທີ່ພັກເຊົ່າ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມກ່ອນ ແລະ ຫຼັງການຢ້ຽມຢາມ ເຂດທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
	8.3 ການສົ່ງເສີມເສດຖະກິດທ້ອງຖິ່ນ.	**ແມ່ນ**	**ບໍ່ແມ່ນ**
1	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງນຳໃຊ້ ຫຼື ຊື້ຜະລິດຕະພັນ ແລະ ການບໍລິການປະຊາຊົນພາຍໃນທ້ອງຖິ່ນ	○	○
2	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງມີຂໍ້ຕົກລົງ ຫຼື ສັນຍາກັບຊຸມຊົນທ້ອງຖິ່ນກ່ຽວກັບການນຳໃຊ້ການບໍລິການ, ລາຄາ ແລະ ຂັ້ນຕອນການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
3	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງສະໜອງຂໍ້ມູນໃຫ້ຄະນະຮັບຜິດຊອບການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມກ່ຽວກັບທ່າແຮງຂອງການບໍລິການທີ່ສາມາດເພີ່ມລາຍຮັບໃຫ້ແກ່ຊຸມຊົນໄດ້.	○	○
4	ຜູ້ປະກອບການທຸລະກິດທ່ອງທ່ຽວ, ພະນັກງານ ແລະ ນັກທ່ອງທ່ຽວຕ້ອງໄດ້ປະກອບສ່ວນ ຫຼື ມີສ່ວນຮ່ວມເຂົ້າໃສ່ວຽກງານພັດທະນາຊຸມຊົນ	○	○
	8.4 ການໂຄສະນາລາຍການທ່ອງທ່ຽວ, ຄວາມຮູ້ ແລະ ປະສົບການທ້ອງຖິ່ນ.	**ແມ່ນ**	**ບໍ່ແມ່ນ**
1	ຮ່ວມມືກັບພະນັກງານນຳທ່ຽວຂັ້ນທ້ອງຖິ່ນ, ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງຈັດລາຍການນຳທ່ຽວ ແລະ ຕີຄວາມໝາຍດ້ານວັດທະນະທຳ/ທຳມະຊາດທີ່ເປັນເອກະລັກຄຸນຄ່າທາງວັດທະນະທຳ ແລະ ທຳມະຊາດໃນເຂດການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○

2	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງອະທິບາຍລະບຽບການແກ່ນັກທ່ອງທ່ຽວ, ໂດຍເນັ້ນໃສ່ຄວາມຮັບຜິດຊອບຂອງນັກທ່ອງທ່ຽວໃນການເຄົາລົບຄົນທ້ອງຖິ່ນ ແລະ ຫຼີກເວັ້ນຜົນກະທົບຕໍ່ສິ່ງແວດລ້ອມ	○	○
3	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງຈຳກັດຈຳນວນນັກທ່ອງທ່ຽວຂຶ້ນກັບສະພາບຂອງພື້ນທີ່ ແລະ ຈຳນວນນັກທ່ອງທ່ຽວ, ຈຸດປະສົງແມ່ນເພື່ອສະໜອງປະສົບການໃຫ້ແກ່ນັກທ່ອງທ່ຽວທີ່ບໍ່ສົ່ງຜົນກະທົບຕໍ່ຊຸມຊົນ	○	○
4	ຜູ້ປະກອບການທຸລະກິດທ່ອງທ່ຽວຄວນມີຄວາມຮູ້ກ່ຽວກັບວັດທະນະທຳ ແລະ ທຳມະຊາດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ ແລະ ສາມາດຖ່າຍຖອດຄວາມຮູ້ດັ່ງກ່າວໃຫ້ແກ່ພະນັກງານຂອງຕົນໂດຍສະເພາະແມ່ນພະນັກງານນຳທ່ຽວ ແລະ ຫົວໜ້າທົ່ວ.	○	○
5	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງສະໜອງຂໍ້ມູນຂອງການທ່ອງທ່ຽວທີ່ຖືກຕ້ອງໃຫ້ແກ່ນັກທ່ອງທ່ຽວກ່ຽວກັບຂອບເຂດຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ, ອຸປະກອນທີ່ຈຳເປັນ ແລະ ລະບຽບການຕ່າງໆ ທີ່ມີມາດຕະຖານສູງສຸດ	○	○
	8.5 ການສ້າງຄວາມເພິ່ງພໍໃຈ ແລະ ຄວາມປອດໄພໃຫ້ແກ່ນັກທ່ອງທ່ຽວ ແລະ ຊຸມຊົນ.	**ແມ່ນ**	**ບໍ່ແມ່ນ**
1	ຜູ້ປະກອບການທຸລະກິດທ່ອງທ່ຽວຄວນແນະນຳໃຫ້ນັກທ່ອງທ່ຽວມີປະກັນໄພເດີນທາງ.	○	○
2	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງຮັບປະກັນບັນດາກິດຈະກຳທີ່ມີຄວາມສ່ຽງສູງເຊິ່ງຕ້ອງມີການນຳທ່ຽວ ແລະ ຊ່ວຍເຫລືອຈາກພະນັກງານ ຫຼື ພະນັກງານນຳທ່ຽວທີ່ໄດ້ຮັບການຝຶກອົບຮົມ ແລະ ມີຄວາມຊຳນານ.	○	○
3	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງເຮັດການຕະຫລາດໃຫ້ຖືກຕາມຄວາມຄາດຫວັງຂອງລູກຄ້າຢ່າງເໝາະສົມກັບພື້ນທີ່ ແລະ ກິດຈະກຳຂອງການທ່ອງທ່ຽວແບບປະຊາຊົນມີສ່ວນຮ່ວມ	○	○
4	ຜູ້ປະກອບການທ່ອງທ່ຽວ ແລະ ພະນັກງານຕ້ອງໄດ້ຮັບການຝຶກອົບຮົມການປະຖົມພະຍາບານເບື້ອງຕົ້ນ	○	○
5	ຜູ້ປະກອບການທຸລະກິດທ່ອງທ່ຽວຕ້ອງມີການປັບປຸງຄຸນນະພາບຂອງການປະຕິບັດງານເປັນປະຈຳຕາມການສຳຫຼວດຄຳຄິດຄຳເຫັນຄວາມເພິ່ງພໍໃຈຂອງນັກທ່ອງທ່ຽວ, ຄຳຕິຊົມຂອງນັກທ່ອງທ່ຽວ	○	○